**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2848 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2025

# ຂໍ້ຕົກລົງ
# ວ່າດ້ວຍການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບ ເຄື່ອງກຳເນີດລັງສີ

- ອີງຕາມ ກົດໝາຍ ວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ອີງຕາມ ກົດໝາຍ ວ່າດ້ວຍຄວາມປອດໄພຈາກລັງສີ ສະບັບເລກທີ 61/ສພຊ, ວັນທີ 14 ທັນວາ 2018;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມມາດຕະຖານ ແລະ ວັດແທກ ສະບັບເລກທີ 8935/ກມວ, ລົງວັນທີ 15 ຕຸລາ 2025.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ໃຫ້ບໍລິການ ເພື່ອໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ແນໃສ່ຮັບປະກັນທາງດ້ານຄຸນນະພາບ, ຄວາມປອດໄພ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ**

ການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ແມ່ນການຕິດຕາມ, ກວດກາ ແລະ ບັນທຶກຂໍ້ມູນ ກ່ຽວກັບການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ເພື່ອໃຫ້ຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຄື່ອງກຳເນີດລັງສີ** ໝາຍເຖິງ ເຄື່ອງມື ຫຼື ອຸປະກອນ ທີ່ໄດ້ຮັບພະລັງງານຈະປ່ອຍລັງສີອອກມາ ເປັນຕົ້ນ ເຄື່ອງເອັກສເຣສ໌ (x-ray), ເຄື່ອງສາຍແສງຜະລິດຕະພັນ, ເຄື່ອງຈັກ ຫຼື ອຸປະກອນອື່ນ;

2. **ຜູ້ດຳເນີນທຸລະກິດເຄື່ອງກຳເນີດລັງສີ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນທຸລະກິດ ກ່ຽວກັບການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ໃຫ້ບໍລິການ ເຄື່ອງກຳເນີດລັງສີ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ ກ່ຽວກັບການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ໃຫ້ບໍລິການ ເຄື່ອງກຳເນີດລັງສີ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ ແລະ ການສະເໜີຂໍຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ

**ມາດຕາ 5 ປະເພດເຄື່ອງກຳເນີດລັງສີ**

ເຄື່ອງກຳເນີດລັງສີ ທີ່ຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບ ມີ ສີ່ ປະເພດ ດັ່ງນີ້:

1. ເຄື່ອງກຳເນີດລັງສີ ດ້ານການແພດ;
2. ເຄື່ອງກຳເນີດລັງສີ ດ້ານການຄ້າ ແລະ ຂົນສົ່ງ;
3. ເຄື່ອງກຳເນີດລັງສີ ດ້ານກະສິກຳ;
4. ເຄື່ອງກຳເນີດລັງສີ ດ້ານກວດສອບວັດຖຸມີຄ່າ.

**ມາດຕາ 6 ເຄື່ອງກຳເນີດລັງສີດ້ານການແພດ**

ເຄື່ອງກຳເນີດລັງສີ ດ້ານການແພດ ແມ່ນເຄື່ອງເອັກສເຣສ໌ ແລະ ເຄື່ອງຖ່າຍພາບກຳເນີດລັງສີອະໄວຍະວະຕ່າງໆ ຊຶ່ງເປັນເຄື່ອງກຳເນີດລັງສີ ດ້ານການບົ່ງມະຕິ ມີດັ່ງນີ້:

1. ເຄື່ອງກຳເນີດລັງສີ ທົ່ວໄປ;
2. ເຄື່ອງກຳເນີດລັງສີ ແຂ້ວ;
3. ເຄື່ອງກຳເນີດລັງສີ ເຕົ້ານົມ;
4. ເຄື່ອງກຳເນີດລັງສີ ລະບົບເສັ້ນເລືອດ;
5. ເຄື່ອງກຳເນີດລັງສີ ຄອມພິວເຕີ;
6. ເຄື່ອງສ່ອງກວດລັງສີ;
7. ເຄື່ອງກຳເນີດລັງສີ ດ້ານການແພດອື່ນໆ.

**ມາດຕາ 7 ເຄື່ອງກຳເນີດລັງສີ ດ້ານການຄ້າ ແລະ ຂົນສົ່ງ**

ເຄື່ອງກຳເນີດລັງສີ ດ້ານການຄ້າ ແລະ ຂົນສົ່ງ ມີດັ່ງນີ້:

1. ເຄື່ອງກຳເນີດລັງສີ ລົດບັນທຸກສິນຄ້າຕາມດ່ານຊາຍແດນ;
2. ເຄື່ອງກຳເນີດລັງສີ ກວດກາເຄື່ອງຜ່ານເຂົ້າສະໜາມບິນ ແລະ ສະຖານີລົດໄຟ;
3. ເຄື່ອງກຳເນີດລັງສີ ດ້ານການຄ້າ ແລະ ຂົນສົ່ງອື່ນໆ.

**ມາດຕາ 8 ເຄື່ອງກຳເນີດລັງສີ ດ້ານກະສິກຳ**

ເຄື່ອງກຳເນີດລັງສີ ດ້ານກະສິກຳ ມີດັ່ງນີ້:

1. ເຄື່ອງກຳເນີດລັງສີ ຂ້າເຊື້ອ;
2. ເຄື່ອງກຳເນີດລັງສີ ປ່ຽນແນວພັນພືດ;
3. ເຄື່ອງກຳເນີດລັງສີ ດ້ານກະສິກຳອື່ນໆ.

**ມາດຕາ 9 ເຄື່ອງກຳເນີດລັງສີ ດ້ານກວດສອບວັດຖຸມີຄ່າ**

ເຄື່ອງກຳເນີດລັງສີ ດ້ານກວດສອບວັດຖຸມີຄ່າ ແມ່ນເຄື່ອງກວດສອບ ແລະ ວິເຄາະພາຍໃນຂອງວັດຖຸມີຄ່າ ໂດຍບໍ່ຕ້ອງທຳລາຍວັດຖຸດັ່ງກ່າວ ຊຶ່ງປະກອບ ມີຄື: ເຄື່ອງກຳເນີດລັງສີ ກວດສອບວັດຖຸມີຄ່າ ທີ່ໃຊ້ໃນການກວດສອບນອກສະຖານທີ່ ແລະ ເຄື່ອງກຳເນີດລັງສີ ກວດສອບວັດຖຸມີຄ່າ ທີ່ໃຊ້ຢູ່ໃນບ່ອນຈຳໜ່າຍ, ຫ້ອງທົດລອງ ຫຼື ໂຮງງານຜະລິດວັດຖຸມີຄ່າ.

**ມາດຕາ 10 ການສະເໜີຂໍຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສະເໜີຂໍຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ໃຫ້ປະຕິບັດ ດັ່ງນີ້:

1. ການສະເໜີຂໍຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຕ້ອງປະກອບເອກະສານ ດັ່ງນີ້:

   1) ຄຳຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
   2) ສຳເນົາໃບທະບຽນວິສາຫະກິດ;
   3) ສຳເນົາໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຄື່ອງກຳເນີດລັງສີ;
   4) ໃບຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີຈາກຕົ້ນທາງ ສຳລັບການນຳເຂົ້າຈາກຕ່າງປະເທດ.

2. ການສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ທີ່ໃຫ້ບໍລິການ ຕ້ອງປະກອບເອກະສານ ດັ່ງນີ້:

   1) ຄຳຮ້ອງ ຕາມແບບພິມຂອງກົມມາດຕະຖານ ແລະ ວັດແທກ;
   2) ສຳເນົາໃບຢັ້ງຢືນຂຶ້ນທະບຽນເຄື່ອງກຳເນີດລັງສີ;
   3) ສຳເນົາໃບຢັ້ງຢືນກວດສອບເຄື່ອງກຳເນີດລັງສີ.

**ມາດຕາ 11 ການພິຈາລະນາການສະເໜີຂໍຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້, ກົມມາດຕະຖານ ແລະ ວັດແທກ ຕ້ອງແຕ່ງຕັ້ງພະນັກງານລົງກວດສອບເຄື່ອງກຳເນີດລັງສີ ພາຍໃນ ຫ້າວັນ ລັດຖະການ ເພື່ອລົງເກັບກຳຂໍ້ມູນ ເພື່ອຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກຳເນີດລັງສີ, ພາຍຫຼັງລົງກວດສອບ ຫາກເຫັນວ່າຜົນການກວດສອບຄຸນນະພາບເຄື່ອງກຳເນີດລັງສີ ຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ, ກົມມາດຕະຖານ ແລະ ວັດແທກ ຕ້ອງອອກໃບຢັ້ງຢືນຂຶ້ນທະບຽນເຄື່ອງກຳເນີດລັງສີ ແລະ ໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກຳເນີດລັງສີ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບຜົນການກວດສອບຄຸນນະພາບເຄື່ອງກຳເນີດລັງສີ ເປັນຕົ້ນໄປ.

ກໍລະນີ ເອກະສານບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງຮັບຊາບ ພາຍໃນ ສາມວັນ ລັດຖະການ ເພື່ອປັບປຸງແກ້ໄຂ.

ກໍລະນີ ບໍ່ສາມາດອອກໃບຢັ້ງຢືນຂຶ້ນທະບຽນເຄື່ອງກຳເນີດລັງສີ ແລະ ໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກຳເນີດລັງສີ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ ສາມວັນ ລັດຖະການ ພາຍຫຼັງລົງກວດສອບເຄື່ອງກຳເນີດລັງສີ ເປັນຕົ້ນໄປ.

**ມາດຕາ 12 ອາຍຸໃບຢັ້ງຢືນຂຶ້ນທະບຽນ ແລະ ໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກຳເນີດລັງສີ**

ໃບຢັ້ງຢືນຂຶ້ນທະບຽນເຄື່ອງກຳເນີດລັງສີ ແມ່ນຈະອອກໃຫ້ພຽງຄັ້ງດຽວ ຊຶ່ງບໍ່ມີອາຍຸການໃຊ້ງານ.

ໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກຳເນີດລັງສີ ມີອາຍຸ ໜຶ່ງປີ. ສຳລັບໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກຳເນີດລັງສີ ດ້ານກວດສອບວັດຖຸມີຄ່າ ມີອາຍຸ ຫົກເດືອນ.

## ໝວດທີ 3
## ຮູບແບບ ແລະ ຫຼັກການ ຂຶ້ນທະບຽນ ແລະ ກວດສອບ ຄຸນນະພາບເຄື່ອງກໍາເນີດລັງສີ

**ມາດຕາ 13 ຮູບແບບການຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກໍາເນີດລັງສີ**

ການຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ມີຮູບແບບ ດັ່ງນີ້:

1. ຕ້ອງຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ທີ່ຜະລິດ, ນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ແລະ ກ່ອນການໃຫ້ບໍລິການ;
2. ການກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ແບບປົກກະຕິ ໜຶ່ງປີ ຕໍ່ຄັ້ງ, ສໍາລັບເຄື່ອງກໍາເນີດລັງສີ ດ້ານກວດສອບວັດຖຸມີຄ່າ ແມ່ນ ຫົກເດືອນ ຕໍ່ຄັ້ງ;
3. ການກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ແບບມີການແຈ້ງໃຫ້ຮູ້ລ່ວງໜ້າ ເປັນການກວດສອບນອກແຜນ ທີ່ມີຄວາມຈໍາເປັນ, ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດສອບຮັບຮູ້ລ່ວງໜ້າ;
4. ການກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ແບບກະທັນຫັນ ເປັນການກວດສອບແບບຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດສອບຮູ້ລ່ວງໜ້າ.

**ມາດຕາ 14 ຫຼັກການຂຶ້ນທະບຽນ ແລະ ກວດສອບຄຸນນະພາບຂອງເຄື່ອງກໍາເນີດລັງສີ**

ການຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ການຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ທຸກຄັ້ງຕ້ອງມີບັດເຈົ້າໜ້າທີ່ ຫຼື ພະນັກງານ ຊຶ່ງອອກໂດຍກົມມາດຕະຖານ ແລະ ວັດແທກ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕາມການມອບໝາຍ;
2. ການຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ຫາກເຫັນວ່າຜົນການກວດສອບເຄື່ອງກໍາເນີດລັງສີ ຖືກຕ້ອງສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ, ກົມມາດຕະຖານ ແລະ ວັດແທກ ຕ້ອງອອກໃບຢັ້ງຢືນຂຶ້ນທະບຽນ ແລະ ໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກໍາເນີດລັງສີ;

ກໍລະນີ ຜົນການກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ, ກົມມາດຕະຖານ ແລະ ວັດແທກ ຈະບໍ່ອອກໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກໍາເນີດລັງສີ, ແຕ່ຜູ້ດໍາເນີນທຸລະກິດ ສາມາດນໍາເອົາເຄື່ອງກໍາເນີດລັງສີຂອງຕົນ ໄປສະເໜີຂໍການກວດສອບ ແລະ ຢັ້ງຢືນຄຸນນະພາບ ຈາກຫ້ອງກວດສອບຄຸນນະພາບອື່ນ ທີ່ໄດ້ຮັບມາດຕະຖານສາກົນ ເພື່ອສົ່ງຜົນການກວດສອບຄຸນນະພາບເຄື່ອງກໍາເນີດລັງສີ ໃຫ້ກົມມາດຕະຖານ ແລະ ວັດແທກ ພິຈາລະນາຄືນໃໝ່.

## ໝວດທີ 4
## ສິດ ແລະ ພັນທະ ຂອງຜູ້ດໍາເນີນທຸລະກິດເຄື່ອງກໍາເນີດລັງສີ

**ມາດຕາ 15 ສິດຂອງຜູ້ດໍາເນີນທຸລະກິດເຄື່ອງກໍາເນີດລັງສີ**

ຜູ້ດໍາເນີນທຸລະກິດເຄື່ອງກໍາເນີດລັງສີ ມີສິດ ດັ່ງນີ້:

1. ສະເໜີຂໍຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກໍາເນີດລັງສີ;
2. ນໍາເອົາເຄື່ອງກໍາເນີດລັງສີຂອງຕົນ ໄປສະເໜີຂໍການກວດສອບ ແລະ ຢັ້ງຢືນຄຸນນະພາບ ຈາກຫ້ອງກວດສອບຄຸນນະພາບອື່ນ ທີ່ໄດ້ຮັບມາດຕະຖານສາກົນ;
3. ບໍລິການ, ໂຄສະນາເຜີຍແຜ່ຄຸນນະພາບເຄື່ອງກໍາເນີດລັງສີ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ພາຍຫຼັງໄດ້ຮັບການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກໍາເນີດລັງສີ;
4. ປົກປ້ອງສິດ ແລະ ຜົນປະໂຫຍດ ກ່ຽວກັບການດໍາເນີນທຸລະກິດຂອງຕົນ;

5. ຮ້ອງຂໍຄວາມເປັນທຳ ຕໍ່ອົງການຄຸ້ມຄອງລັດທີ່ກ່ຽວຂ້ອງ ຫາກເຫັນວ່າການຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກຳເນີດລັງສີ ບໍ່ໄດ້ຮັບຄວາມເປັນທຳ;

6. ນຳໃຊ້ສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 16 ພັນທະຂອງຜູ້ດຳເນີນທຸລະກິດເຄື່ອງກຳເນີດລັງສີ

ຜູ້ດຳເນີນທຸລະກິດເຄື່ອງກຳເນີດລັງສີ ມີພັນທະ ດັ່ງນີ້:

1. ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ໃຫ້ບໍລິການ ເຄື່ອງກຳເນີດລັງສີ ຕ້ອງໄດ້ຮັບການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບ ໃຫ້ຖືກຕ້ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

2. ເຄື່ອງກຳເນີດລັງສີ ທີ່ໄດ້ຮັບການກວດສອບ ແລະ ຢັ້ງຢືນຄຸນນະພາບແລ້ວ ຫາກມີການດັດແກ້ ແລະ ສ້ອມແປງເຄື່ອງ ຊຶ່ງມີຜົນຕໍ່ຄຸນນະພາບ ແລະ ຄວາມປອດໄພ ຕ້ອງໄດ້ສະເໜີຂໍກວດສອບ ແລະ ຢັ້ງຢືນຄຸນນະພາບຄືນໃໝ່;

3. ພະນັກງານຄວບຄຸມເຄື່ອງກຳເນີດລັງສີ ຕ້ອງໄດ້ຜ່ານການຝຶກອົບຮົມການນຳໃຊ້ເຄື່ອງກຳເນີດລັງສີ ແລະ ຕ້ອງປະຕິບັດຕາມລະບຽບການກ່ຽວຂ້ອງ;

4. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ຍ້ອນຄຸນນະພາບເຄື່ອງກຳເນີດລັງສີ ບໍ່ຖືກຕ້ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

5. ສະໜອງເອກະສານກ່ຽວຂ້ອງໃຫ້ຄົບຖ້ວນ ກ່ຽວກັບການສະເໜີຂໍຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ;

6. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ;

7. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ ໄປຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ໃນແຕ່ລະຄັ້ງ;

8. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 17 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ກ່ຽວກັບເຄື່ອງກຳເນີດລັງສີ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງອຸປະສັກ, ຂັດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ຫຼື ພະນັກງານ ໃນການຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກຳເນີດລັງສີ;

3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບການຂຶ້ນທະບຽນ ແລະ ກວດສອບຄຸນນະພາບເຄື່ອງກຳເນີດລັງສີ;

4. ປິດບັງຂໍ້ມູນຄວາມຈິງ ຫຼື ບໍ່ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

5. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 18 ຂໍ້ຫ້າມສຳລັບ ຜູ້ດຳເນີນທຸລະກິດເຄື່ອງກຳເນີດລັງສີ

ຫ້າມຜູ້ດຳເນີນທຸລະກິດເຄື່ອງກຳເນີດລັງສີ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ໃຫ້ບໍລິການ ເຄື່ອງກຳເນີດລັງສີ ທີ່ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ ພາກພື້ນ ແລະ ສາກົນ;

2. ສ້າງອຸປະສັກກີດຂວາງ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ໄປຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ;

3. ໃຫ້ສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ໃນຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ;

4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບການຂຶ້ນທະບຽນ,ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 19 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ**

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ກົດໜ່ວງ, ຖ່ວງດຶງ ຫຼື ແກ່ຍາວເວລາ ໃນການພິຈາລະນາເອກະສານ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບການດຳເນີນທຸລະກິດ ກ່ຽວການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ໂດຍບໍ່ໄດ້ຮັບອະນຸຍາດ;

4. ອອກໃບຢັ້ງຢືນຂຶ້ນທະບຽນເຄື່ອງກຳເນີດລັງສີ ແລະ ໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກຳເນີດລັງສີ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

5. ຮຽກເອົາ, ທວງເອົາ, ຮັບສິນບົນ ຫຼື ຫາຜົນປະໂຫຍດອື່ນ ໂດຍບໍ່ຖືກຕ້ອງ ຈາກຜູ້ດຳເນີນທຸລະກິດ;

6. ເປັນນາຍໜ້າ, ທີ່ປຶກສາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນທຸລະກິດ ກ່ຽວກັບເຄື່ອງກຳເນີດລັງສີ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ

**ມາດຕາ 20 ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ**

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ປະກອບມີ ດັ່ງນີ້:

1. ກົມມາດຕະຖານ ແລະ ວັດແທກ;

2. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງກົມມາດຕະຖານ ແລະ ວັດແທກ**

ກົມມາດຕະຖານ ແລະ ວັດແທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

3. ອອກໃບຢັ້ງຢືນຂຶ້ນທະບຽນ ແລະ ໃບຢັ້ງຢືນກວດສອບຄຸນນະພາບເຄື່ອງກຳເນີດລັງສີ;

4. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ;

5. ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ ຕາມແຜນປົກກະຕິ ຫຼື ກວດແບບສຸກເສີນ;

6. ແນະນຳຜູ້ດຳເນີນທຸລະກິດເຄື່ອງກຳເນີດລັງສີ ກ່ຽວກັບຂັ້ນຕອນການສະເໜີຂໍຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກຳເນີດລັງສີ;

7. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ກໍານົດປະເພດເຄື່ອງກໍາເນີດລັງສີ ທີ່ຕ້ອງຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກໍາເນີດລັງສີ ໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ;

8. ປັບໃໝ ແລະ ນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກໍາເນີດລັງສີ ຕໍ່ພາກສ່ວນກ່ຽວຂ້ອງ ແລະ ຂັ້ນເທິງຮັບຊາບ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງພະແນກ ອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນໍາ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກໍາເນີດລັງສີ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

2. ຮັບຄໍາຮ້ອງຂໍຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກໍາເນີດລັງສີ ແລ້ວນໍາສົ່ງໃຫ້ກົມມາດຕະຖານ ແລະ ວັດແທກ ເພື່ອພິຈາລະນາຕາມຂັ້ນຕອນ;

3. ປະສານສົມທົບກັບກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກໍາເນີດລັງສີ;

4. ຕິດຕາມ, ກວດກາ ແລະ ສະໜອງຂໍ້ມູນ ກ່ຽວກັບວຽກງານຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກໍາເນີດລັງສີ;

5. ປັບໃໝ ແລະ ນໍາໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມາດຕະຖານ ຕາມການແບ່ງຂັ້ນຄຸ້ມຄອງ;

6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນ, ກວດສອບ ແລະ ຢັ້ງຢືນຄຸນນະພາບເຄື່ອງກໍາເນີດລັງສີ ໃຫ້ກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນກ່ຽວຂ້ອງ ຮັບຊາບຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມມາດຕະຖານ ແລະ ວັດແທກ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອເຜີຍແຜ່ແນະນໍາ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ